## ບົດຂ່າວ

## ພິທີລົງນາມ ວ່າດ້ວຍ ການຮ່ວມມືດ້ານບໍລິການທະນາຄານ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານແຫ່ງປະເທດຈີນ ຈຳກັດ.




ໃນວັນທີ 21 ກຸມພາ 2017 ທີ່ຜ່ານມາ, ຢູ່ທີ່ໂຮງແຮມແລນມາກ, ນະຄອນຫຼວງວຽງຈັນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ທະນາຄານແຫ່ງປະເທດຈີນ ຈຳກັດ ຫລື Bank of China Limited (BOC) ໄດ້ຈັດພິທີລົງນາມວ່າດ້ວຍ ການຮ່ວມມືດ້ານບໍລິການທະນາຄານຮ່ວມກັນລະຫວ່າງສອງທະນາຄານດັ່ງກ່າວ ໂດຍສະເພາະການຮ່ວມມືການໃຫ້ບໍລິການບັນດາບໍລິສັດທີ່ຮັບເໝົາໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ທີ່ໄດ້ມີການວາງສີລາລຶກ ເພື່ອລິເລີ່ມໂຄງການໃນທ້າຍປີ 2016 ທີ່ຜ່ານມາ.

ພິທີລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ:

- ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່, ທຄຕລ

  ແລະ

- ທ່ານ ອູ ຊື້ສຽງ, ຜູ້ອຳນວຍການໃຫຍ່ ຮັບຜິດຊອບລູກຄ້າສະຖາບັນການເງິນ ປະຈຳສຳນັກງານໃຫຍ່ BOC

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມຄັ້ງນີ້ ປະກອບມີ:

ທ່ານ ຄຳສຸກ ສູນດາລາ, ຮອງປະທານ ສະພາບໍລິຫານ ທຄຕລ

ພ້ອມດ້ວຍຄະນະກົມ, ຄະນະພະແນກ ຈາກ ທະນາຄານແຫ່ງ ສ.ປ.ປ ລາວ, ຫ້ອງການ ກະຊວງການເງິນ, ຄະນະອໍານວຍການ, ຄະນະພະແນກ ແລະ ຄະນະສູນ ຂອງ ທຄຕລ ແລະ ຄະນະຜູ້ແທນຂັ້ນສູງຂອງ ທະນາຄານ BOC ປະຈໍາສໍານັກງານໃຫຍ່, ສາຂາປັກກິ່ງ, ສາຂາຢຸນນານ ແລະ ສາຂານະຄອນຫຼວງວຽງຈັນ ກໍ່ໄດ້ເຂົ້າຮ່ວມໃນພິທີດັ່ງກ່າວ.

ສັນຍາການຮ່ວມມືກັນລະຫວ່າງສອງທະນາຄານ ຈະອໍານວຍຄວາມສະດວກໃນດ້ານການບໍລິການທະນາຄານທົ່ວໄປ ໃຫ້ແກ່ລູກຄ້າທັງສອງທະນາຄານ ໂດຍສະເພາະກໍ່ແມ່ນບັນດາບໍລິສັດຜູ້ຮັບເໝົາ, ບໍລິສັດຜູ້ຮັບເໝົາຕໍ່ ກໍ່ຄືພະນັກງານຜູ້ທີ່ປະຕິບັດວຽກງານໃຫ້ແກ່ ໂຄງການກໍ່ສ້າງ ທາງລົດໄຟລາວຈີນ ເພື່ອໃຫ້ໄດ້ຮັບຄວາມສະດວກສະບາຍ ໃນການດໍາເນີນທຸລະກໍາຊໍາລະສະສາງ, ການເບີກຈ່າຍເງິນເດືອນໃຫ້ແກ່ພະນັກງານ ແລະ ບໍລິການອື່ນໆ ເພື່ອຮັບໃຊ້ໃຫ້ແກ່ ໂຄງການດັ່ງກ່າວ.

ທ່ານ ພູຂົງ ຈັນທະຈັກ, ຜູ້ອໍານວຍການໃຫຍ່ ທຄຕລ ມະຫາຊົນໄດ້ກ່າວວ່າ: ການຕັດສິນໃຈຮ່ວມມືລະຫວ່າງ ທັງສອງທະນາຄານ ກໍ່ຄື ທຄຕລ ແລະ BOC ໃນມື້ນີ້, ເປັນຂີດໝາຍອັນສໍາຄັນຂອງສອງທະນາຄານ ເຊິ່ງຈະເພີ່ມຄວາມສາມາດອໍານວຍຄວາມສະດວກ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງລູກຄ້າທັງສອງທະນາຄານ, ກໍ່ຄືລູກຄ້າຄົນລາວ ແລະ ລູກຄ້າທີ່ເປັນ ບຸກຄົນ, ບໍລິສັດ ຈາກ ສ.ປ ຈີນ ທີ່ເຮັດວຽກພາຍໃນໂຄງການ ສ້າງທາງລົດໄຟລາວ-ຈີນ ເຊິ່ງລັດຖະບານຂອງສອງປະເທດຖືເອົາເປັນໂຄງການທີ່ສໍາຄັນ. ທ່ານເອງກໍ່ຫວັງວ່າ ການຮ່ວມມືໃນຄັ້ງນີ້ຈະສາມາດປະກອບສ່ວນອັນສໍາຄັນໃຫ້ແກ່ການພັດທະນາ ເສດຖະກິດ-ສັງຄົມຂອງ ສ.ປ.ປ ລາວ ພ້ອມທັງຜັນຂະຫຍາຍການຮ່ວມມື ຂອງ 2 ປະເທດ ລາວ-ຈີນໄດ້ເປັນຢ່າງດີ. ທ່ານອູ ຊື້ສຽງ ຜູ້ອໍານວຍການໃຫຍ່ ຮັບຜິດຊອບລູກຄ້າສະຖາບັນການເງິນ ປະຈໍາສໍານັກງານໃຫຍ່ BOC ໄດ້ກ່າວວ່າ: ການເຊັນສັນຍາຮ່ວມມືກັບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນມື້ນີ້ແມ່ນເອີ້ນໄດ້ວ່າເປັນບາດກ້າວສໍາຄັນຂອງ BOC ໃນການເປີດຕະຫຼາດລູກຄ້າສະຖາບັນການເງິນໃນ ສ.ປ.ປ.ລາວ, ພ້ອມທັງເປັນການເພີ່ມຂະຫຍາຍຄວາມຊັດເຈນຂອງຄວາມຕັ້ງໃຈ ຂອງ BOC ໃນການໃຫ້ບໍລິການການທະນາຄານ ເພື່ອຮັບໃຊ້ໃນການພັດທະນາເສດຖະກິດ-ສັງຄົມຂອງ ສ.ປ.ປ.ລາວ. ທ່ານອູ ຊື້ສຽງ ຍັງໄດ້ເວົ້າຫຍໍ້ເຖິງທຸລະກໍາຫຼັກການຮ່ວມມືໃນຄັ້ງນີ້ອີກ ໂດຍໄດ້ຍົກຕົວຢ່າງເຊັ່ນ: ການຮ່ວມມືການບໍລິການໃຫ້ແກ່ໂຄງການຂະໜາດໃຫຍ່ໃນລາວ, ການເປັນຕົວແທນຊໍາລະສະສາງເປັນສະກຸນເງິນຢວນ, ການສະໜອງເງິນສົດ, ການຮ່ວມປ່ອຍເງິນກູ້, ແລະ BOC ຍັງເປີດກວ້າງໂອກາດການຮ່ວມມືກັບ BCELໃນຕໍ່ໜ້າອີກດ້ວຍ.

ທຄຕລ ເປັນທະນາຄານທຸລະກິດໃນຖັນແຖວໜ້າຂອງ ສ.ປ.ປ ລາວ. ເຊິ່ງໄດ້ເປັນ ທະນາຄານທໍາອິດ ທີ່ໄດ້ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ເປັນທະນາຄານທີ່ຖື ສ່ວນຄອງຕະຫລາດ ທີ່ໃຫຍ່ ໃນການບໍລິການທະນາຄານພາຍໃນປະເທດເຊັ່ນ: ເງິນຝາກ ປະມານ 40%, ຊັບສິນ ປະມານ 27% ແລະ ເງິນກູ້ ປະມານ 28% ໃນປີ 2016 ທີ່ຜ່ານມາ. ພ້ອມທັງມີເຄືອຄ່າຍຄວບຄຸມຢູ່ຫລາຍຈຸດ ທົ່ວປະເທດ ເຊິ່ງປະກອບດ້ວຍ 19 ສາຂາ, 80 ໜ່ວຍບໍລິການ ແລະ ມີບຸກຄະລາກອນຫຼາຍກວ່າ 1,600 ກວ່າຄົນ. ທະນາຄານໄດ້ນໍາໃຊ້ເຕັກໂນໂລຢີທີ່ທັນສະໄໝ ເຂົ້າໃນການບໍລິການ ໂດຍສະເພາະແມ່ນການບໍລິການອອນລາຍຜ່ານລະບົບ BCEL One ແລະ Internet Banking (i-Bank) ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງລູກຄ້າທັງພາຍໃນ ແລະ ຕ່າງປະເທດ.

ສໍາລັບທະນາຄານ BOC ກໍ່ເປັນທະນາຄານທຸລະກິດທີ່ມີການດໍາເນີນທຸລະກິດຢ່າງຕໍ່ເນື່ອງ ແລະ ຍາວນານທີ່ສຸດໃນປະເທດຈີນ. ໃນປີ 2017, BOC ຈະມີອາຍຸຄົບ 105ປີ. ນອກນັ້ນ, BOC ກໍຍັງເປັນທະນາຄານທີ່ມີຄວາມເປັນສາກົນ ແລະ ຫຼາກຫຼາຍທີ່ສຸດຂອງຈີນອີກດ້ວຍ. BOC ເປັນທະນາຄານທີ່ມີສ່ວນແບ່ງການຕະຫຼາດຫຼາຍທີ່ສຸດໃນທຸລະກໍາທີ່ເປັນເງິນຢວນ ລະ

ຫວ່າງປະເທດ ແລະ ເປັນທະນາຄານທີ່ມີຄວາມໂດດເດັ່ນນະຕອນນີ້. ໃນປະຈຸບັນ, ທະນາຄານດັ່ງກ່າວມີສາຂາທີ່ດຳເນີນງານທັງໝົດ 51 ປະເທດ ແລະ ພູມີພາກ ເຊິ່ງໃນນັ້ນກວມເອົາ 20 ປະເທດທີ່ນອນຢູ່ໃນຍຸດທະສາດ "1 ເສັ້ນທາງ 1 ເຂດເສດຖະກິດ" ຂອງທ່ານ ສີຈິ້ນຜິງ. ໃນນີ້ແມ່ນລວມເຖິງສາຂານະຄອນຫຼວງວຽງຈັນ, ທະນາຄານແຫ່ງປະເທດຈີນແມ່ນມີຄວາມມຸ່ງໝັ້ນໃນການໃຫ້ບໍລິການທາງດ້ານການເງິນທີ່ຄອບຄຸມທົ່ວໂລກ. ທະນາຄານແຫ່ງປະເທດຈີນຈຳກັດມີເຄືອຄ່າຍການຊຳລະສະສາງເງິນຢວນທີ່ກວ້າງຂວາງ, ໄດ້ຮັບມອບສິດເປັນທະນາຄານຊຳລະສະສາງເງິນຢວນໃນ ຮ່ອງກົງ, ມາເກົ໊າ, ໄຕ້ຫວັນ, ອາເມລິກາ,ເຢຍລະມັນ, ຝລັ່ງ, ອິດສະຕາລີ, ມາເລເຊຍ, ຮົງກາລີ, ອາຟຣິກາໃຕ້ , ແລະ ຊຳເບຍ. ນອກນັ້ນ; ຍັງໃຫ້ການບໍລິການຊຳລະສະສາງເງິນຢວນທີ່ຄອບຄຸມທັງໝົດ 5 ທະວີບ.